# ຄຳນຳ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ເປັນເອກະສັນຮັບຮອງເອົາກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI ຄະນະບໍລິຫານງານສູນກາງພັກ ໄດ້ມີມະຕິຕົກລົງສະບັບເລກທີ 01/ຄບສພ, ລົງວັນທີ 29 ມີນາ 2021 ວ່າດ້ວຍການປະກາດໃຊ້ກົດລະບຽບພັກ ປະຊາຊົນປະຕິວັດລາວ ສະໄໝທີ XI.

ເພື່ອໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ແລະ ກົດລະບຽບພັກສະໄໝທີ XI, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າຂຽນ, ປັບປຸງເອກະສານອົບຮົມມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ ໂດຍເຮັດເປັນ 13 ຄຳຖາມ, 13 ຄຳຕອບ.

ເນື້ອໃນເອກະສານດັ່ງກ່າວ ເປັນບ່ອນອີງໃຫ້ແກ່ຄະນະພັກຮາກຖານ, ຄະນະໜ່ວຍພັກນຳໄປຈັດຕັ້ງຮ່ຳຮຽນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກໃຫ້ຮັບຮູ້-ເຂົ້າໃຈກ່ຽວກັບພັກປະຊາຊົນປະຕິວັດລາວ, ເງື່ອນໄຂເພື່ອຝຶກຝົນຫຼໍ່ຫຼອມຕົນເອງເຂົ້າເປັນສະມາຊິກພັກ, ຂໍ້ຫ້າມສຳລັບສະມາຊິກພັກ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ສິ່ງທີ່ຕ້ອງໄດ້ເອົາໃຈໃສ່ປົກປ້ອງບົດບາດ, ກຽດສັກສີຂອງພັກ ເມື່ອເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ.

ການຈັດພິມເອກະສານດັ່ງກ່າວໃນຄັ້ງນີ້ ບໍ່ອາດຫຼີກລ່ຽງຂໍ້ບົກຜ່ອງໄດ້. ສະນັ້ນ, ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງຫວັງຢ່າງຍິ່ງວ່າຈະໄດ້ຮັບການປະກອບຄຳເຫັນຈາກບັນດາທ່ານຜູ້ອ່ານ ແລະ ນຳໃຊ້ເພື່ອໃຫ້ພວກເຮົານຳໄປປັບປຸງແກ້ໄຂ ໃຫ້ດີຂຶ້ນກວ່າເກົ່າໃນຄັ້ງຕໍ່ໄປ.

**ຄະນະໂຄສະນາອົບຮົມສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ ເລກທີ 16 /ຄອສພ.
ນະຄອນຫຼວງວຽງຈັນ, ວັນທີ 07 / 07 /2021

# ຄຳແນະນຳ
# ຂອງຄະນະໂຄສະນາອົບຮົມສູນກາງພັກ
# ກ່ຽວກັບການນຳໃຊ້ເອກະສານອົບຮົມມະຫາຊົນ
# ຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ

**ເຖິງ:** ຄະນະພັກກະຊວງ-ອົງການ, ຄະນະພັກນະຄອນຫຼວງ, ແຂວງ, ຄະນະພັກເມືອງ, ນະຄອນ ໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງຮໍ່າຮຽນ ເອກະສານອົບຮົມມະຫາຊົນຜູ້ທີ່ຈະ ຂະຫຍາຍເຂົ້າເປັນສະມາຊິກພັກ.

- ອີງຕາມມະຕິ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ອີງຕາມກົດລະບຽບພັກ ສະໄໝທີ XI.
- ອີງຕາມຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 38 /ຄລສພ, ລົງວັນທີ 09 ມີນາ 2021 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ

ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງ ພັກປະຊາຊົນປະຕິວັດລາວ.

- ອີງຕາມມະຕິຕົກລົງ ຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 01/ຄບສພ, ລົງວັນທີ 29 ມີນາ 2021 ວ່າດ້ວຍການປະກາດໃຊ້ກົດລະບຽບພັກ ປະຊາຊົນປະຕິວັດລາວ ສະໄໝທີ XI ຂອງພັກ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າປັບປຸງເອກະສານອົບຮົມມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ ໃຫ້ສອດຄ່ອງກັບເນື້ອໃນມະຕິກອງປະຊຸມໃຫຍ່ຂອງພັກ ແລະ ກົດລະບຽບພັກ ປະຊາຊົນປະຕິວັດລາວ ສະໄໝທີ XI. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມສູນກາງພັກ ແນະນຳບາງບັນຫາ ດັ່ງນີ້:

## I. ຈຸດປະສົງລະດັບຄາດໝາຍ.

- ເພື່ອເຮັດໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ ຮັບຮູ້, ເຂົ້າໃຈກ່ຽວກັບປະຫວັດ, ຄວາມເປັນມາ, ອຸດົມການ ແລະ ທາດແທ້ຂອງພັກປະຊາຊົນປະຕິວັດລາວ; ເຂົ້າໃຈກ່ຽວກັບມາດຕະຖານ, ເງື່ອນໄຂມະຫາຊົນຜູ້ທີ່ຈະເຂົ້າເປັນສະມາຊິກພັກ, ຜົນປະໂຫຍດທີ່ສະມາຊິກພັກໄດ້ຮັບ ແລະ ເມື່ອໄດ້ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວແລ້ວ ຈະປົກປ້ອງບົດບາດ,ກຽດສັກສີຂອງພັກຄືແນວໃດ.

- ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ເຮັດໃຫ້ມະຫາຊົນຜູ້ທີ່ຈະເຂົ້າເປັນສະມາຊິກພັກ ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີມາດຕະຖານ, ເງື່ອນໄຂຄົບຖ້ວນ ແລະ ມີຄວາມຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ເພື່ອເພີ່ມກຳລັງແຮງສູ້ຮົບໃຫ້ແກ່ພັກນັບມື້ຫຼາຍຂຶ້ນ.

## II. ເປົ້າໝາຍ.

ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າພັກຢູ່ກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ, ກຸ່ມບ້ານ, ບໍລິສັດ, ໂຮງຈັກ, ໂຮງງານ

ແລະ ກົມກອງການຜະລິດ.

## III. ເນື້ອໃນ ແລະ ວິທີຈັດຕັ້ງປະຕິບັດ.

### 1. ເນື້ອໃນ.

ເນື້ອໃນສໍາລັບເອກະສານອົບຮົມມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ ມີ 13 ຄໍາຖາມ-ຄໍາຕອບ ດັ່ງນີ້:

ຄໍາຖາມ 1: ພັກການເມືອງແມ່ນຫຍັງ ແລະ ເປັນຫຍັງຈຶ່ງມີພັກການເມືອງ ?.

ຄໍາຖາມ 2: ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນຄືແນວໃດ ?.

ຄໍາຖາມ 3: ພັກປະຊາຊົນປະຕິວັດລາວ ແມ່ນພັກແນວໃດ ?.

ຄໍາຖາມ 4: ພັກປະຊາຊົນປະຕິວັດລາວ ຈັດຕັ້ງຕາມຫຼັກການອັນໃດແດ່ ?.

ຄໍາຖາມ 5: ພັກປະຊາຊົນປະຕິວັດລາວ ມີລະບົບສາຍໃຍການຈັດຕັ້ງ ຄືແນວໃດ ?.

ຄໍາຖາມ 6: ພັກປະຊາຊົນປະຕິວັດລາວ ປະກອບດ້ວຍບຸກຄົນຄືແນວໃດແດ່ ?.

ຄໍາຖາມ 7: ພັກປະຊາຊົນປະຕິວັດລາວມີວັດຖຸປະສົງ ແລະ ອຸດົມການ ຄືແນວໃດ ?.

ຄໍາຖາມ 8: ພັກປະຊາຊົນປະຕິວັດລາວ ມີທາດແທ້ແນວໃດແດ່?.

ຄໍາຖາມ 9: ມາດຕະຖານຂອງສະມາຊິກພັກ ແລະ ເງື່ອນໄຂມະຫາຊົນຈະຂະຫຍາຍເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ມີແນວໃດ ?.

ຄໍາຖາມ 10: ສະມາຊິກພັກມີໜ້າທີ່, ພັນທະ ແລະ ມີຜົນປະໂຫຍດຫຍັງແດ່ ?.

ຄໍາຖາມ 11: ຂໍ້ຫ້າມສໍາລັບສະມາຊິກພັກ ປະຊາຊົນປະຕິວັດ

ລາວ ມີຫຍັງແດ່ ?.

ຄຳຖາມ 12: ເຂົ້າເປັນສະມາຊິກພັກ ປະຊາຊົນປະຕິວັດລາວ ເພື່ອຫຍັງ ?.

ຄຳຖາມ 13: ຖ້າໄດ້ເຂົ້າເປັນສະມາຊິກພັກ ປະຊາຊົນປະຕິວັດລາວ ແລ້ວ ຈະປົກປ້ອງບົດບາດ, ກຽດສັກສີຂອງພັກ ຄື ແນວໃດ ?.

**2. ວິທີຈັດຕັ້ງປະຕິບັດ.**

**1.ໜ່ວຍພັກຮາກຖານ.**

① ໜ່ວຍພັກຮາກຖານອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

② ໜ່ວຍພັກອ້ອມຂ້າງເມືອງ, ນະຄອນ ແລະ ທຽບເທົ່າ, ບ້ານ ແມ່ນຄະນະໂຄສະນາອົບຮົມເມືອງ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

③ ໜ່ວຍພັກຮາກຖານອ້ອມຂ້າງກະຊວງ-ອົງການ ແມ່ນໜ່ວຍພັກຮາກຖານ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

**2. ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ.**

① ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

② ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານອ້ອມຂ້າງເມືອງ, ນະຄອນ ແລະ ທຽບເທົ່າ, ກຸ່ມບ້ານ ແລະ ບ້ານ ແມ່ນຄະນະໂຄສະນາອົບຮົມເມືອງ, ນະຄອນ ແລະ ທຽບເທົ່າ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ

ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

③ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານອ້ອມຂ້າງກະຊວງ-ອົງການ ແມ່ນຄະນະໜ່ວຍພັກຮາກຖານກະຊວງ-ອົງການ ເປັນຜູ້ຮັບຜິດຊອບຮຽນສະໜັບສະໜູນ ໃຫ້ມະຫາຊົນຜູ້ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກ.

ດັ່ງນັ້ນ, ຈິ່ງແນະນຳມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

**ຄຳຖາມ 1: ພັກການເມືອງແມ່ນຫຍັງ ແລະ ເປັນຫຍັງຈິ່ງມີພັກການເມືອງ ?.**

**ຕອບ:**

ພັກການເມືອງ ແມ່ນອົງການຈັດຕັ້ງນຳພາສູງສຸດຂອງຊົນຊັ້ນໃດໜຶ່ງ ຫຼື ກຸ່ມຄົນໃດໜຶ່ງຢູ່ໃນສັງຄົມ; ຈັດຕັ້ງຂຶ້ນເພື່ອນຳພາ, ປົກປ້ອງ ແລະ ຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນ ຫຼື ກຸ່ມຄົນໃດໜຶ່ງຢູ່ໃນສັງຄົມ.

+ ມີພັກການເມືອງ ກໍຍ້ອນວ່າ:

1. ເພື່ອນຳພາຂະບວນການເຄື່ອນໄຫວຂອງປະຊາຊົນ ຫຼື ສັງຄົມໃຫ້ໄປເຖິງຈຸດປະສົງທີ່ພັກການເມືອງນັ້ນກຳນົດໄວ້.

2. ເພື່ອປົກປ້ອງ ແລະ ຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນ.

ຕົວຢ່າງ: ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງ; ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນ, ເປັນຕົວແທນທີ່ຈົງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍຕໍ່ສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ຂອງຊາດລາວທັງໝົດ. ພັກປະຊາຊົນປະຕິວັດລາວ ສ້າງຕັ້ງຂຶ້ນເພື່ອນຳພາປວງຊົນລາວທັງຊາດຕໍ່ສູ້ຍາດເອົາເອກະລາດ ອຳນາດອະທິປະໄຕຂອງຊາດ ແລະ ສິດເປັນເຈົ້າຂອງປະຊາຊົນ, ດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ, ປົກປັກຮັກສາປະເທດຊາດ ໄວ້ໃຫ້ໝັ້ນຄົງ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມ.

**ຄຳຖາມ 2: ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນ ຄືແນວໃດ ?.**

**ຕອບ:**

1. ພັກປະຊາຊົນປະຕິວັດລາວໄດ້ກຳເນີດຈາກລັດທິຮັກຊາດທີ່ແທ້ຈິງ ຂອງປະຊາຊົນລາວບັນດາເຜົ່າ ຊຶ່ງມີຫຼາຍຂະບວນການຕໍ່ສູ້ທີ່ດຸເດືອດ ເຊັ່ນ:

+ ຂະບວນການຕໍ່ສູ້ຂອງປະຊາຊົນ ຢູ່ແຂວງສະຫວັນນະເຂດ ແຕ່ປີ 1901-1903 ພາຍໃຕ້ການນຳພາຂອງພໍ່ກະດວດ.

+ ຂະບວນການລຸກຮື້ຂຶ້ນດ້ວຍອາວຸດ ຂອງປະຊາຊົນພາກໃຕ້ ແຕ່ປີ 1901-1937 ພາຍໃຕ້ການນຳພາຂອງອົງແກ້ວ ແລະ ອົງກົມມະດຳ.

+ ຂະບວນການຕໍ່ສູ້ຂອງປະຊາຊົນເຜົ່າລື້ ຢູ່ເມືອງສິງ ແຕ່ປີ 1914-1918.

+ ຂະບວນການຕໍ່ສູ້ ຂອງປະຊາຊົນເຜົ່າຜູ້ໄທ ຢູ່ຊຳເໜືອ ໃນປີ 1916.

+ ຂະບວນການຕໍ່ສູ້ຂອງປະຊາຊົນເຜົ່າມົ້ງ ຢູ່ບັນດາແຂວງພາກເໜືອ ພາຍໃຕ້ການນຳພາຂອງເຈົ້າຟ້າປັດໄຈ ແຕ່ປີ 1918-1922 ແລະ ຂະບວນການຕໍ່ສູ້ອື່ນໆ ຢູ່ທ້ອງຖິ່ນຕ່າງໆ.

2. ປີ 1930 ປະທານ ໂຮ່ຈິມິນ ໄດ້ສ້າງຕັ້ງພັກກອມມູນິດອິນດູຈີນ, ເພິ່ນໄດ້ນຳເອົາລັດທິມາກ-ເລນິນ ແລະ ແນວທາງການປະຕິວັດເຂົ້າມາເຜີຍແຜ່ສຶກສາອົບຮົມພະນັກງານຮາກຖານຂອງລາວ. ປີ 1934 ຄະນະພັກແຄວ້ນລາວ ທີ່ຂຶ້ນກັບພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ດອນຊີງຊູ້ ນະຄອນຫຼວງວຽງຈັນ ເພື່ອນຳພາການປະຕິວັດລາວໂດຍກົງ.

ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ຂະບວນການຕໍ່ສູ້ຂອງປະຊາຊົນ 3 ຊາດໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ແລະ ຮຽກຮ້ອງໃຫ້ມີພັກນຳພາຢູ່ແຕ່ລະປະເທດ. ສະນັ້ນ,

ເພື່ອສືບທອດພາລະກິດຂອງພັກກອມມູນິດອິນດູຈີນ ໃນວັນທີ 22 ມີນາ ປີ 1955 ປະທານ ໄກສອນ ພົມວິຫານ ພ້ອມດ້ວຍໝູ່ຄະນະ ທີ່ເປັນສະມາຊິກພັກກອມມູນິດອິນດູຈີນ ໃນເວລານັ້ນ ໄດ້ຈັດຕັ້ງກອງປະຊຸມສ້າງຕັ້ງພັກຂຶ້ນ ໂດຍໃສ່ຊື່ວ່າ: **"ພັກປະຊາຊົນລາວ"** ຕໍ່ມາປ່ຽນຊື່ເປັນ **"ພັກປະຊາຊົນປະຕິວັດລາວ"**.(ໃນກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ ປີ1972).

**ຄຳຖາມ 3: ພັກປະຊາຊົນປະຕິວັດລາວ ແມ່ນພັກແນວໃດ ?.**

**ຕອບ:**

1. ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງ, ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນລາວ, ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍ ຕໍ່ສິດ ແລະ ຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ຂອງຊາດລາວທັງໝົດ.

2. ພັກປະຊາຊົນປະຕິວັດລາວ ເປັນພັກກຳອຳນາດ, ເປັນແກນນຳໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ, ນຳພາປະຊາຊົນບັນດາເຜົ່າ ປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ.

3. ພັກປະຊາຊົນປະຕິວັດລາວ ແມ່ນພັກທີ່ຢຶດໝັ້ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກ ເປັນພື້ນຖານທາງດ້ານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ.

**ຄຳຖາມ 4: ພັກປະຊາຊົນປະຕິວັດລາວຈັດຕັ້ງຕາມຫຼັກການ ອັນໃດແດ່ ?.**

**ຕອບ:**

ພັກປະຊາຊົນປະຕິວັດລາວ ຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ ດັ່ງນີ້:

1. ອົງການນຳຂອງພັກຂັ້ນໃດ ແມ່ນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກຂອງຂັ້ນນັ້ນເປັນຜູ້ເລືອກຕັ້ງ; ກໍລະນີພິເສດຈຶ່ງແມ່ນຄະນະບໍລິຫານງານພັກຂັ້ນເທິງບົ່ງຕົວແຕ່ງຕັ້ງ, ແຕ່ການບົ່ງຕົວແຕ່ງຕັ້ງບໍ່ໃຫ້ກາຍ 1 ສະໄໝ.

2. ອົງການນຳສູງສຸດຂອງທົ່ວພັກ ແມ່ນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ, ຢູ່ແຕ່ລະຂັ້ນແມ່ນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກຂັ້ນນັ້ນ, ໃນລະຫວ່າງສອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ແມ່ນຄະນະບໍລິຫານງານສູນກາງພັກ ເປັນຜູ້ບໍລິຫານວຽກງານຂອງພັກ; ໃນລະຫວ່າງສອງສະໄໝກອງປະຊຸມໃຫຍ່ຢູ່ແຕ່ລະຂັ້ນແມ່ນຄະນະບໍລິຫານງານພັກຂັ້ນນັ້ນ ເປັນຜູ້ບໍລິຫານວຽກງານຂອງພັກ.

3. ການຈັດຕັ້ງຂອງພັກຂັ້ນຕ່າງໆ ຕ້ອງປະຕິບັດຫຼັກການນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ນຳພາດ້ວຍມະຕິ, ມີການຊຸກຍູ້, ຕິດຕາມ, ກວດກາ. ການພິຈາລະນາຕົກລົງວຽກງານສຳຄັນຂອງພັກຕ້ອງປະຕິບັດຕາມສຽງສ່ວນຫຼາຍທີ່ບໍ່ຂັດກັບກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ.

4. ການພິຈາລະນາວຽກງານສຳຄັນໃດໜຶ່ງ ຂອງຄະນະພັກແຕ່ລະຂັ້ນ ຕ້ອງມີສະມາຊິກພັກຢ່າງໜ້ອຍ 2/3 ຂອງຈຳນວນກຳມະການໃນຄະນະພັກເຂົ້າຮ່ວມ; ທຸກມະຕິຂອງກອງປະຊຸມຈະຖືກຮັບຮອງໄດ້ ກໍຕໍ່ເມື່ອໄດ້ຮັບຄຳເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການໃນຄະນະພັກທັງໝົດເຂົ້າຮ່ວມ.

- ສໍາລັບໜ່ວຍພັກ, ການພິຈາລະນາວຽກງານໃດໜຶ່ງ ຕ້ອງມີສະມາຊິກພັກຢ່າງໜ້ອຍ 2/3 ຂອງຈໍານວນສະມາຊິກພັກໃນໜ່ວຍເຂົ້າຮ່ວມ; ທຸກມະຕິຂອງກອງປະຊຸມຈະຖືກຮັບຮອງກໍຕໍ່ເມື່ອໄດ້ຮັບຄໍາເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກພັກທັງໝົດໃນໜ່ວຍພັກ.

- ກ່ອນການລົງຄະແນນສຽງຮັບຮອງເອົາມະຕິນັ້ນ ບັນດາກໍາມະການໃນຄະນະພັກ ຫຼື ສະມາຊິກພັກ ມີສິດອອກຄວາມເຫັນຕໍ່ເນື້ອໃນຕ່າງໆຂອງກອງປະຊຸມ, ເມື່ອຮັບຮອງເປັນມະຕິແລ້ວ ຕ້ອງເວົ້າ ແລະ ປະຕິບັດຕາມມະຕິຢ່າງເຂັ້ມງວດ.

5. ການສ້າງຕັ້ງ ຫຼື ຍຸບເລີກຄະນະພັກຮາກຖານ ແລະ ໜ່ວຍພັກແມ່ນຄະນະພັກຂັ້ນເທິງຖັດນັ້ນ ເປັນຜູ້ພິຈາລະນາຕົກລົງ.

6. ຄະນະພັກ ຕ້ອງມີຄວາມຮັບຜິດຊອບລາຍງານການເຄື່ອນໄຫວ ຕໍ່ຄະນະພັກຂັ້ນເທິງ ແລະ ກອງປະຊຸມໃຫຍ່ຂັ້ນຂອງຕົນ; ຄະນະພັກຂັ້ນເທິງ ຕ້ອງແຈ້ງຂ່າວສະພາບການອັນຈໍາເປັນໃຫ້ການຈັດຕັ້ງພັກຂັ້ນລຸ່ມ ແລະ ສະມາຊິກພັກທຸກສະຫາຍ ຕາມເວລາທີ່ກໍານົດໄວ້.

7. ການຈັດຕັ້ງພັກທຸກຂັ້ນ ແລະ ສະມາຊິກພັກທຸກສະຫາຍ ຕ້ອງເຄົາລົບ ແລະ ປະຕິບັດຕາມມະຕິຂອງພັກຢ່າງເຂັ້ມງວດ; ບຸກຄົນຕ້ອງປະຕິບັດຕາມການຈັດຕັ້ງ; ສຽງສ່ວນໜ້ອຍຕ້ອງຂຶ້ນກັບສຽງສ່ວນຫຼາຍ; ຂັ້ນລຸ່ມຕ້ອງປະຕິບັດຕາມມະຕິຂອງຂັ້ນເທິງ; ທົ່ວພັກຕ້ອງປະຕິບັດຕາມມະຕິຂອງຄະນະບໍລິຫານງານສູນກາງພັກ.

8. ການຈັດຕັ້ງພັກທຸກຂັ້ນ ມີສິດຕັດສິນບັນຫາຕ່າງໆ ໃນຂອບເຂດສິດຂອງຕົນທີ່ບໍ່ຂັດກັບແນວທາງ, ນະໂຍບາຍ, ມະຕິ, ຄໍາສັ່ງ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ.

**ຄຳຖາມ 5: ພັກປະຊາຊົນປະຕິວັດລາວ ມີລະບົບສາຍໃຍການຈັດຕັ້ງ ຄືແນວໃດ ?.**

**ຕອບ:**

1. ລະບົບການຈັດຕັ້ງພັກ ແມ່ນຈັດຕັ້ງຂຶ້ນຕາມລະບົບກົງຈັກການຈັດຕັ້ງບໍລິຫານ.

2. ທຸກການຈັດຕັ້ງພັກໃນທົ່ວແຂວງ, ນະຄອນຫຼວງ ໂຮມເຂົ້າກັນເປັນອົງຄະນະພັກແຂວງ, ນະຄອນຫຼວງ; ທຸກການຈັດຕັ້ງພັກໃນທົ່ວກະຊວງ-ອົງການ ໂຮມເຂົ້າກັນເປັນອົງຄະນະພັກກະຊວງ-ອົງການ; ທຸກການຈັດຕັ້ງພັກໃນທົ່ວເມືອງ-ນະຄອນ ໂຮມເຂົ້າກັນເປັນອົງຄະນະພັກເມືອງ-ນະຄອນ.

3. ການຈັດຕັ້ງພັກຂອງບັນດາກົມກອງ, ຫົວໜ່ວຍວິຊາການ, ວິສາຫະກິດຂອງສູນກາງຕັ້ງຢູ່ທ້ອງຖິ່ນໃດ ແມ່ນຂຶ້ນກັບ ແລະ ຢູ່ພາຍໃຕ້ການນຳພາໂດຍກົງ ຂອງຄະນະພັກທ້ອງຖິ່ນນັ້ນ.

4. ການຈັດຕັ້ງພັກສະຖານທູດ, ສະຖານກົງສູນ ຫຼື ອົງການຈັດຕັ້ງຕ່າງໆ ຂອງລາວປະຈຳຢູ່ຕ່າງປະເທດແມ່ນຂຶ້ນກັບ ແລະ ໃຕ້ການນຳພາໂດຍກົງ ຂອງອົງຄະນະພັກກະຊວງການຕ່າງປະເທດ; ການຈັດຕັ້ງຮາກຖານພັກຂອງນັກສຶກສາ ແລະ ສະມາຊິກພັກ ທີ່ເປັນນັກສຶກສາຢູ່ປະເທດໃດໃຫ້ຂຶ້ນກັບຄະນະພັກສະຖານທູດ ຫຼື ຄະນະພັກສະຖານກົງສູນລາວປະຈຳຢູ່ປະເທດນັ້ນ, ຖ້າປະເທດໃດບໍ່ມີຄະນະພັກສະຖານທູດ ຫຼື ຄະນະພັກສະຖານກົງສູນ ແມ່ນໃຫ້ຂຶ້ນໂດຍກົງກັບອົງຄະນະພັກກະຊວງການຕ່າງປະເທດ.

5. ການສ້າງຕັ້ງ ຫຼື ຍຸບເລີກອົງຄະນະພັກຂັ້ນໃດໜຶ່ງ ແມ່ນຄະນະພັກຂັ້ນເທິງຖັດຕົນ ເປັນຜູ້ຄົ້ນຄວ້າແລ້ວລາຍງານ ແລະ ນຳສະເໜີໃຫ້ຄະນະພັກຂັ້ນເທິງອີກຂັ້ນໜຶ່ງ ເປັນຜູ້ພິຈາລະນາຕົກລົງ.

6. ຄະນະພັກທຸກຂັ້ນ ມີສິດສ້າງຕັ້ງອົງການຊ່ວຍວຽກຂອງຕົນຕາມການກຳນົດ ຂອງຄະນະບໍລິຫານງານສູນກາງພັກ.

7. ໃນກໍລະນີພິເສດ, ຄະນະເລຂາທິການສູນກາງພັກ ມີສິດສ້າງຕັ້ງອົງຄະນະພັກຂັ້ນໃດໜຶ່ງຂຶ້ນ ຕາມຄວາມຕ້ອງການຂອງວຽກງານ.

**ຄຳຖາມ 6: ພັກປະຊາຊົນປະຕິວັດລາວ ປະກອບດ້ວຍບຸກຄົນ ຄືແນວໃດແດ່ ?.**

**ຕອບ:**

ພັກປະຊາຊົນປະຕິວັດລາວ ປະກອບດ້ວຍບຸກຄົນທີ່ຕື່ນຕົວ, ຫ້າວຫັນປະຕິວັດ; ດີເດັ່ນກວ່າໝູ່ ແລະ ໄດ້ຮັບຄວາມໄວ້ວາງໃຈກວ່າໝູ່ໃນຊົນຊັ້ນກຳມະກອນ, ຊາວກະສິກອນ, ປັນຍາຊົນປະຕິວັດ ແລະ ຊັ້ນຄົນຜູ້ອອກແຮງງານອື່ນໃນເຜົ່າຕ່າງໆ ຊຶ່ງໄດ້ຜ່ານການທົດສອບໃນຂະບວນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ມີຄວາມສະໝັກໃຈເຂົ້າໃນອົງການຈັດຕັ້ງຂອງພັກ ເພື່ອສູ້ຊົນປະຕິບັດວັດຖຸປະສົງ ແລະ ອຸດົມການຂອງພັກຢ່າງສຸດກົກສຸດປາຍ.

**ຄຳຖາມ 7: ພັກປະຊາຊົນປະຕິວັດລາວ ມີວັດຖຸປະສົງ ແລະ ອຸດົມການ ຄືແນວໃດ ?.**

**ຕອບ:**

1. ເມື່ອກ່ອນນຳພາປວງຊົນລາວ ດຳເນີນການຕໍ່ສູ້ຕ້ານພວກຈັກກະພັດລ່າເມືອງຂຶ້ນ ເພື່ອນຳເອົາຄວາມເປັນເອກະລາດມາໃຫ້ແກ່ປະເທດຊາດ ແລະ ສິດເປັນເຈົ້າມາໃຫ້ປະຊາຊົນເຮັດສຳເລັດພາລະກິດປົດປ່ອຍຊາດ, ລົບລ້າງລະບອບລ່າເມືອງຂຶ້ນ ແລະ ສັກດີນາ, ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນ (ວັນທີ 2 ທັນວາ 1975).

2. ໃນປັດຈຸບັນ ແມ່ນນຳພາປວງຊົນລາວທັງຊາດ ດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານ ທີ່ມີຫຼັກການຂອງພັກ, ປົກປັກຮັກສາປະເທດຊາດ ໄວ້ໃຫ້ໝັ້ນຄົງ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມ.

**ຄຳຖາມ 8: ພັກປະຊາຊົນປະຕິວັດລາວມີທາດແທ້ແນວໃດແດ່?.**

**ຕອບ:**

1. ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງ, ແມ່ນການຈັດຕັ້ງການເມືອງສູງສຸດ ທັງແມ່ນພັກທີ່ມີທາດແທ້ຂອງຊົນຊັ້ນກຳມະກອນ; ແມ່ນພັກປະຕິວັດມາກ-ເລນິນ; ແມ່ນພັກທີ່ມີອຸດົມການເພື່ອປະເທດຊາດ ແລະ ເພື່ອປະຊາຊົນ.

ດ້ວຍທາດແທ້ຄືແນວນັ້ນ, ພັກເຮົາຈຶ່ງຢຶດໝັ້ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກ ເປັນພື້ນຖານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ.

2. ພັກໄດ້ຢຶດໝັ້ນໃນແນວຄິດ ແລະ ອຸດົມຄະຕິຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ຄື: ນຳພາປວງຊົນລາວທັງຊາດດຳເນີນການຕໍ່ສູ້ປົດປ່ອຍຊາດ, ຍາດເອົາຄວາມເປັນເອກະລາດແຫ່ງຊາດ ແລະ ສິດເປັນເຈົ້າປະເທດຊາດ, ນຳພາສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງປະຖົມປັດໄຈໃນທຸກດ້ານ ເພື່ອກໍ່ສ້າງລະບອບສັງຄົມນິຍົມໃຫ້ເປັນຈິງເປັນກ້າວໆ ຢ່າງໝັກແໜ້ນ.

3. ພັກບໍ່ມີວັດຖຸປະສົງອື່ນໃດ, ນອກຈາກນຳພາປວງຊົນລາວ ທັງຊາດ ສ້າງປະເທດລາວໃຫ້ມັ່ງຄັ່ງເຂັ້ມແຂງ ນຳເອົາຄວາມຢູ່ດີ ກິນດີ, ຄວາມຮັ່ງມີຜາສຸກ, ຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ມາສູ່ປວງຊົນລາວເຮົາ.

**ຄຳຖາມ 9: ມາດຕະຖານຂອງສະມາຊິກພັກ ແລະ ເງື່ອນໄຂຂອງມະຫາຊົນ ຜູ້ຈະຂະຫຍາຍເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ມີແນວໃດ ?.**

**ຕອບ:**

**ກ. ມາດຕະຖານຂອງສະມາຊິກພັກປະຊາຊົນປະຕິວັດລາວ ມີດັ່ງນີ້:**

1. ແມ່ນນັກຮົບປະຕິວັດໃນກອງນຳໜ້າຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າ; ແມ່ນຜູ້ມີນ້ຳໃຈເສຍສະຫຼະສູງ ເພື່ອປະເທດຊາດ, ເພື່ອປະຊາຊົນ, ມີຄວາມຮັບ ຜິດຊອບສູງຕໍ່ໜ້າທີ່ວຽກງານ, ບຸກບືນສູ້ຊົນ ເພື່ອບັນລຸອຸດົມການຂອງພັກ.

2. ແມ່ນຜູ້ທີ່ດຸໝັ່ນ, ປະຢັດ, ບໍລິສຸດ, ສັດຊື່, ຮັບໃຊ້ປະຊາຊົນ, ຈົງຮັກພັກດີຕໍ່ອຸດົມການຂອງພັກ ແລະ ປົກປັກຮັກສາຄວາມສາມັກຄີເປັນເອກະພາບພາຍໃນພັກ.

3. ແມ່ນຜູ້ທີ່ຖືເອົາຜົນປະໂຫຍດລວມຂອງຊາດ, ຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າ ສູງກວ່າຜົນປະໂຫຍດສ່ວນຕົວ.

4. ແມ່ນຜູ້ທີ່ມີທັດສະນະມະຫາຊົນ, ພົວພັນສະໜິດແໜ້ນກັບມະຫາຊົນ, ເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ, ໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກການຈັດຕັ້ງພັກ ແລະ ມະຫາຊົນ.

5. ແມ່ນຜູ້ທີ່ເປັນແບບຢ່າງທີ່ດີໃນການປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ຢ່າງເຂັ້ມງວດ.

6. ແມ່ນຜູ້ທີ່ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃນທຸກດ້ານ, ບຸກບືນຮ່ຳຮຽນຍົກລະດັບ, ຫ້າວຫັນປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ; ເຄົາລົບ, ປະຕິບັດກົດລະບຽບພັກ, ກົດໝາຍ ແລະ ລະບຽບການ

ຂອງລັດ; ດຸໝັ່ນອອກແຮງງານ, ມີແບບແຜນດຳລົງຊີວິດຖືກຕ້ອງ ແລະ ປອດໃສ.

**ຂ. ເງື່ອນໄຂມະຫາຊົນຈະຂະຫຍາຍເຂົ້າເປັນສະມາຊິກພັກ ມີດັ່ງນີ້:**

1. ແມ່ນພົນລະເມືອງລາວທີ່ມີອາຍຸແຕ່ 18 ປີຂຶ້ນໄປ, ໄດ້ຜ່ານການຝຶກຝົນ, ຫຼໍ່ຫຼອມ ແລະ ທົດສອບໃນຂະບວນການວຽກງານຕົວຈິງ, ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້, ໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກການຈັດຕັ້ງພັກ ແລະ ມະຫາຊົນ.

2. ແມ່ນຜູ້ທີ່ມີຄວາມຕື່ນຕົວທາງດ້ານການເມືອງ ຕາມອຸດົມຄະຕິຂອງພັກ, ມີຄວາມມຸ່ງຫວັງເຂົ້າພັກເພື່ອອຸທິດຕົນໃຫ້ແກ່ພາລະກິດຂອງພັກ.

3. ແມ່ນຜູ້ທີ່ມີຊີວະປະຫວັດຕົ້ນກຳເນີດ ແລະ ຊີວະປະຫວັດການເຄື່ອນໄຫວຈະແຈ້ງ, ຂາວສະອາດ, ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີສຸຂະພາບດີ ແລະ ເປັນແບບຢ່າງນຳໜ້າໃນຂະບວນການຂອງມະຫາຊົນ.

4. ແມ່ນຜູ້ທີ່ຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກພັກ, ຍິນດີປະຕິບັດກົດລະບຽບພັກ, ເຂົ້າຮ່ວມດຳເນີນຊີວິດການເມືອງຢູ່ໃນການຈັດຕັ້ງຮາກຖານພັກ ແລະ ເສຍເງິນສະຕິພັກ ເປັນປົກກະຕິ.

5. ບ່ອນທີ່ມີການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ, ເປົ້າໝາຍທີ່ຢູ່ໃນເກນອາຍຸໄວໜຸ່ມ ທີ່ຈະຂະຫຍາຍເຂົ້າເປັນສະມາຊິກພັກສຳຮອງ ຕ້ອງເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ມາກ່ອນ ແລະ ໄດ້ຮັບການເຫັນດີຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຢູ່ບ່ອນນັ້ນ.

**ຄຳຖາມ 10: ສະມາຊິກພັກມີໜ້າທີ່, ພັນທະ ແລະ ມີຜົນປະໂຫຍດ ຫຍັງແດ່ ?.**

**ຕອບ:**

**ກ. ສະມາຊິກພັກມີໜ້າທີ່ ດັ່ງນີ້:**

1. ເປັນເຈົ້າການປະຕິບັດແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ; ປະກອບສ່ວນເຂົ້າໃນການກໍ່ສ້າງ, ບູລະນະແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ-ລັດ.

2. ຕັ້ງໜ້າຮໍ່າຮຽນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ແຜນນະໂຍບາຍ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ; ຍົກລະດັບການສຶກສາ, ວິຊາສະເພາະ, ວິທະຍາສາດ-ເຕັກນິກ ແລະ ພາສາຕ່າງປະເທດ ແນໃສ່ເຮັດສຳເລັດໜ້າທີ່ ທີ່ພັກມອບໝາຍໃຫ້.

3. ຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ, ແບບແຜນການນຳພາ; ຍົກສູງຄວາມຮັບຜິດຊອບການເມືອງ, ສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ ແລະ ຄວາມເປັນແບບຢ່າງນຳໜ້າ; ຕ້ານແນວຄິດອາດຍາສິດ, ສໍ້ລາດບັງຫຼວງ, ແນວຄິດເອກະຊົນ, ຈຸ້ມເຈື້ອເຊື້ອສາຍ, ທ້ອງຖິ່ນ, ສວຍໃຊ້ໜ້າທີ່-ຕຳແໜ່ງ, ຫຼົ້ນກິນຟຸ່ມເຟືອຍ ແລະ ສິ່ງຫຍໍ້ທໍ້ອື່ນໆ.

4. ຕັ້ງໜ້າປະກອບສ່ວນເຂົ້າໃນວຽກງານປັບປຸງກໍ່ສ້າງ ແລະ ປັບປຸງພັກຕາມ 5 ຫຼັກການ, 3 ທິດນຳ, ເຂົ້າຮ່ວມດຳເນີນຊີວິດການເມືອງ ແລະ ເສຍເງິນສະຕິພັກ ເປັນປົກກະຕິ.

5. ພົວພັນສະໜິດແໜ້ນກັບປະຊາຊົນ, ເຄົາລົບ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ເຂົ້າຮ່ວມເຄື່ອນໄຫວໃນຂະບວນການຂອງມະຫາຊົນ; ໂຄສະນາ, ສຶກສາອົບຮົມປະຊາຊົນໃຫ້ປະຕິບັດຕາມ

ແນວທາງ, ແຜນນະໂຍບາຍຂອງພັກ; ລັດຖະທຳມະນູນ, ກົດໝາຍ ແລະ ລະ ບຽບການຂອງລັດ.

6. ກຳແໜ້ນ ແລະ ປະຕິບັດນະໂຍບາຍການຕ່າງປະເທດຂອງພັກ-ລັດ, ຍົກສູງນໍ້າໃຈສາມັກຄີສາກົນອັນຜ່ອງໃສຂອງຊົນຊັ້ນກຳມະກອນ; ເດັດດ່ຽວຕໍ່ສູ້ຕ້ານການໂຄສະນາໃສ່ຮ້າຍປ້າຍສີ ແລະ ບິດເບືອນຂອງພວກຄົນບໍ່ດີທີ່ຫວັງມ້າງເພພາຍໃນພັກ ແລະ ລະບອບປະຊາທິປະໄຕປະຊາຊົນລາວ.

7. ສະມາຊິກພັກ ຈະຢູ່ໃນຕຳແໜ່ງໃດກໍຕາມ ຕ້ອງໄດ້ສັບຊ້ອນເຂົ້າຮ່ວມຊີວິດພັກ ໃນການຈັດຕັ້ງຮາກຖານພັກໃດໜຶ່ງ; ຮັບເອົາການຕິດຕາມ, ກວດກາ, ການຕຳນິຕິຊົມຂອງສະມາຊິກພັກ, ມະຫາຊົນ ແລະ ການຈັດຕັ້ງຂັ້ນລຸ່ມ.

**ຂ. ພັນທະ ແລະ ຜົນປະໂຫຍດຂອງສະມາຊິກພັກມີດັ່ງນີ້:**

1. ສະມາຊິກພັກບໍ່ວ່າຢູ່ໃນຖານະຕຳແໜ່ງໃດ ຕ້ອງເຂົ້າຮ່ວມຊີວິດພັກ ແລະ ກອງປະຊຸມຂອງພັກ; ຕັ້ງໜ້າຮໍ່າຮຽນແນວທາງ, ກົດລະບຽບພັກ.

2. ສະມາຊິກພັກໄດ້ຮັບສິດປົກປ້ອງຈາກການຈັດຕັ້ງພັກໃນການເຄື່ອນໄຫວທີ່ຖືກຕ້ອງຕາມແນວທາງ ແຜນນະໂຍບາຍ, ກົດລະບຽບຂອງພັກ; ໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ທີ່ພັກໄດ້ກຳນົດໄວ້.

3. ສະມາຊິກພັກຂໍລາອອກຈາກພັກ ດ້ວຍເຫດຜົນອັນເໝາະສົມ, ໜ່ວຍພັກຕ້ອງຄົ້ນຄວ້າ ແລະ ນຳສະເໜີໃຫ້ຄະນະພັກຂັ້ນເທິງ ທີ່ມີສິດຕົກລົງພິຈາລະນາ.

4. ສະມາຊິກພັກມີອາຍຸສູງ, ສຸຂະພາບອ່ອນເພຍ, ມີຄວາມສະໝັກໃຈຫຼຸດຜ່ອນການເຄື່ອນໄຫວວຽກງານພັກ ກໍຈະໄດ້ຮັບການພິຈາລະນາ.

**ຄໍາຖາມ 11: ຂໍ້ຫ້າມສໍາລັບສະມາຊິກພັກປະຊາຊົນປະຕິວັດລາວ ມີຫຍັງແດ່ ?.**

**ຕອບ:**

1. ຫ້າມເອົາຂໍ້ມູນ, ຂ່າວສານ ແລະ ເອກະສານຕ່າງໆ ທີ່ເປັນຄວາມລັບຂອງຊາດ, ຂອງພັກ, ຂອງລັດ, ຂອງກົມກອງອອກເຜີຍແຜ່, ແຈກຢາຍດ້ວຍຮູບການຕ່າງໆ.

2. ຫ້າມກໍ່ພັກແຍກພວກ, ແບ່ງແຍກຄວາມສາມັກຄີພາຍໃນພັກ, ຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ ແລະ ການກະທໍາຫຼາຍເຄົ້າ, ຫຼາຍພັກການເມືອງ.

3. ຫ້າມແກ້ແຄ້ນ, ປາບປາມ, ບັງຄັບ, ນາບຂູ່ທຸກຮູບແບບຕໍ່ຜູ້ກ່າວຟ້ອງ, ຜູ້ຕໍານິສົ່ງຂ່າວ ແລະ ຜູ້ສະເໜີຂໍ້ມູນລາຍງານດ້ານຫຍໍ້ທໍ້ຕ່າງໆຂອງຕົນ ໃຫ້ແກ່ການຈັດຕັ້ງພັກ ແລະ ຂັ້ນເທິງ.

4. ຫ້າມຈັດຕັ້ງ, ເຄື່ອນໄຫວ, ເຂົ້າຮ່ວມຊຸມນຸມປະທ້ວງຕ້ານການຈັດຕັ້ງພັກ-ລັດ ແລະ ໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີແນວທາງນະໂຍບາຍຂອງພັກ, ທັບຖົມໂຈມຕີບຸກຄົນ ຫຼື ການຈັດຕັ້ງ ແລະ ລະບອບປະຊາທິປະໄຕປະຊາຊົນລາວ.

5. ຫ້າມສວຍໃຊ້ໜ້າທີ່, ຕໍາແໜ່ງ, ສິດອໍານາດຂອງຕົນ ຫຼື ແອບອ້າງຖານະຊື່ສຽງຂອງບຸກຄົນອື່ນ ເພື່ອສະແຫວງຫາຜົນປະໂຫຍດແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ບຸກຄົນອື່ນ ຊຶ່ງເປັນພຶດຕິກໍາການສໍ້ລາດບັງຫຼວງ.

6. ຫ້າມສະມາຊິກພັກ ທີ່ເປັນພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ພະນັກງານລັດວິສະຫະກິດທີ່ມີຖານະຕໍາແໜ່ງ, ສິດອໍານາດ ລວມທັງເລຂາໜ່ວຍພັກ ແລະ ນາຍບ້ານ ແຕ່ງຕັ້ງ, ບັນຈຸສັບຊ້ອນ

ຜົວ ຫຼື ເມຍ, ລູກ ຫຼື ຍາດໃກ້ຊິດ ຮັບຜິດຊອບວຽກງານຈັດຕັ້ງ-ພະນັກງານ, ວຽກງານກວດກາ, ເປັນເລຂາ, ບັນຊີການເງິນ, ນາຍຄັງ, ນາຍສາງ ຫຼື ເປັນ ຜູ້ຈັດຊື້ ແລະ ຈັດຈ້າງຕ່າງໆ ຢູ່ພາຍໃນການຈັດຕັ້ງທີ່ຕົນຮັບຜິດຊອບ.

7. ຫ້າມສະມາຊິກພັກ ທີ່ເປັນພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຍັງປະຈຳການເປັນຜູ້ອຳນວຍການ, ເປັນຄະນະອຳນວຍການ, ເປັນຜູ້ຈັດການວິສະຫະກິດ, ເປັນທີ່ປຶກສາໃຫ້ແກ່ວິສະຫະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ (ຍົກເວັ້ນຜູ້ທີ່ຖືກແຕ່ງຕັ້ງມອບໝາຍຈາກ ການຈັດຕັ້ງ).

8. ຫ້າມປອມແປງເອກະສານ, ນຳໃຊ້ເອກະສານປອມ, ກົດໜ່ວງ ຖ່ວງດຶງເອກະສານຕ່າງໆ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ ນ້ອງ ແລະ ບຸກຄົນອື່ນໆ; ປົກປິດ, ເຊື່ອງອຳຂໍ້ມູນ, ຫຼັກຖານ ຫຼື ລາຍງານບໍ່ ຖືກກັບຄວາມຈິງ; ບໍ່ໃຫ້ການຮ່ວມມືກັບການຈັດຕັ້ງທີ່ກ່ຽວຂ້ອງ ໃນການ ປະຕິບັດໜ້າທີ່.

9. ຫ້າມຍັກຍອກ, ສໍ້ໂກງເອົາຊັບສິນ, ເງິນຄຳຂອງລັດ, ລວມໝູ່, ຂອງພົນລະເມືອງ ແລະ ຫ້າມນຳໃຊ້ງົບປະມານ, ຊັບສິນຂອງລັດ, ລວມໝູ່ ຫຼື ປຸກລະດົມການອຸປະຖຳໃນທຸກຮູບແບບ ເພື່ອຈັດງານຕ່າງໆ ຫຼື ເອົາໄປ ເຮັດຂອງຂວັນ, ຂອງຕ້ອນຮັບໃຊ້ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ບຸກຄົນອື່ນໆ.

10. ຫ້າມຄອບຄອງ, ນຳໃຊ້ຊັບສິນຂອງລັດ, ລວມໝູ່ເກີນກຳນົດ ທີ່ອະນຸຍາດ; ຫ້າມຫັນ, ໂອນ, ໃຫ້ຜູ້ອື່ນເຊົ່າ ຫຼື ເອົາໄປນຳໃຊ້ໂດຍບໍ່ຖືກ ຕ້ອງຕາມກົດໝາຍ ແລະ ລະບຽບການຂອງລັດ.

11. ຫ້າມຫຼິ້ນກິນຟຸມເຟືອຍ, ຈັດງານປະເພນີ ທີ່ເປັນການສ້າງຄ່າ ນິຍົມທີ່ບໍ່ຖືກຕ້ອງ; ຫ້າມຫຼິ້ນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການຫຼິ້ນການພະນັນທີ່ຕ້ອງຫ້າມ; ຫ້າມເຄື່ອນໄຫວເປັນໝໍຜີ, ໝໍດູ, ໝໍເຢົາ ແລະ ສວຍໃຊ້ສາສະໜາເຄື່ອນໄຫວທີ່ຜິດຕໍ່ກົດໝາຍ; ຫ້າມຢູ່ຮ່ວມ

ກັບບຸກຄົນອື່ນໃນສະຖານະຜົວ ຫຼື ເມຍ ແລະ ຫ້າມແຕ່ງງານກັບຄົນຕ່າງ ປະ ເທດ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

ສະມາຊິກພັກທີ່ມີການລະເມີດຂໍ້ຫ້າມດັ່ງກ່າວ ຈະຖືກສຳຫຼວດ, ກວດກາ, ສຶກສາອົບຮົມ ແລະ ລົງວິໄນຢ່າງເຂັ້ມງວດ.

**ຄຳຖາມ 12: ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ເພື່ອຫຍັງ ?.**

**ຕອບ:**

**ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ເພື່ອ:**

ເພື່ອຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ດ້ວຍຄວາມຊື່ສັດ; ໝາຍຄວາມວ່າ ເມື່ອໄດ້ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວແລ້ວ; ການຈັດຕັ້ງພັກ-ລັດ ມອບໝາຍວຽກງານອັນໃດໃຫ້ກໍຍິນດີຮັບເອົາ, ບໍ່ເລືອກວຽກງານເຮັດ ແລະ ຕັ້ງໜ້າປະຕິບັດໃຫ້ໄດ້ຮັບຜົນດີ; ບໍ່ສວຍໃຊ້ໜ້າທີ່ວຽກງານທີ່ຕົນຮັບຜິດຊອບຫາຜົນປະໂຫຍດສ່ວນຕົວ, ພັກພວກທີ່ບໍ່ຖືກຕ້ອງຕາມແນວທາງຂອງພັກ, ກົດໝາຍຂອງລັດ.

**ຄຳຖາມ 13: ຖ້າໄດ້ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ ແລ້ວຈະປົກປ້ອງບົດບາດ, ກຽດສັກສີຂອງພັກເຮົາ ແນວໃດ ?.**

**ຕອບ:**

1. ເມື່ອໄດ້ເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວແລ້ວ ກ່ອນອື່ນໝົດ ຈະຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນສະມາຊິກພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ສະເໝີ.

2. ຕັ້ງໜ້າຄົ້ນຄວ້າຮໍ່າຮຽນ ແລະ ປົກປ້ອງຄວາມຖືກຕ້ອງຂອງລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ແນວທາງ, ແຜນນະໂຍບາຍຂອງພັກ.

3. ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ພາຍໃນພັກ ແລະ ໃນສັງຄົມ.

4. ຍົກສູງສະຕິລະວັງຕົວ ຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກໍາລັງປໍລະປັກ ແລະ ກຸ່ມຄົນບໍ່ດີທີ່ຫວັງມ້າງເພທໍາລາຍພັກ ກໍຄືລະບອບປະຊາທິປະໄຕປະຊາຊົນລາວ.